**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ເລກທີ 238 /ຈນວ

ວັນທີ 6 ມິ.ນ 2024

# ຂໍ້ຕົກລົງ

## ວ່າດ້ວຍກອງທຶນພັດທະນາກິລາ - ກາຍຍະກໍາ

- ອີງຕາມ ມາດຕາ 19, 20 ໃນໝວດ IV ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍກິລາ-ກາຍຍະກໍາ ສະບັບເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019;
- ອີງຕາມ ດໍາລັດວ່າດ້ວຍກອງທຶນກິລາ-ກາຍຍະກໍາ ສະບັບເລກທີ 295/ລບ, ລົງວັນທີ 29/08/2022;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 6, ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ສະບັບເລກທີ 009/ສປນວ, ລົງວັນທີ 28 ກຸມພາ 2024;

## ເຈົ້າຄອງນະຄອນຫຼວງວຽງຈັນ ຕົກລົງ:

## ໝວດ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງ, ນໍາໃຊ້, ຕິດຕາມ ແລະ ກວດກາ ກອງທຶນພັດທະນາກິລາ-ກາຍຍະກໍາ ເພື່ອການປະກອບສ່ວນສົມທົບທຶນ ແລະ ວັດຖຸອຸປະກອນໃຫ້ການປັບປຸງພື້ນຖານໂຄງລ່າງໃຫ້ມີຄຸນນະພາບ, ຮັບໃຊ້ການພັດທະນານັກກິລາ ແລະ ບຸກຄະລາກອນກິລາໃຫ້ມີຄວາມເຂັ້ມແຂງ ພ້ອມທັງກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນ ໃນງານມະຫາກໍາກິລານັກຮຽນມັດທະຍົມສຶກສາທົ່ວປະເທດ, ງານມະຫາກໍາກິລາແຫ່ງຊາດ ແລະ ງານມະຫາກໍາກິລາຄົນພິການແຫ່ງຊາດ.

### ມາດຕາ 2 ນິຍາມ

ກອງທຶນພັດທະນາກິລາ - ກາຍຍະກໍາ ແມ່ນກອງທຶນຂອງອົງການປົກຄອງນະຄອນຫຼວງ ທີ່ສ້າງຕັ້ງຂຶ້ນເພື່ອການປະກອບສ່ວນສະສົມທຶນ ແລະ ວັດຖຸອຸປະກອນ ຈາກແຫຼ່ງຕ່າງໆໃຫ້ພຽງພໍ ຮັບໃຊ້ເຂົ້າໃນການພັດທະນາ ກິລາ-ກາຍຍະກໍາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ຂຽນຫຍໍ້ "ກທພກ"

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ການພັດທະນາກິລາ-ກາຍຍະກຳ ໝາຍເຖິງ: ການພັດທະນາຂະບວນການເຄື່ອນໄຫວທາງດ້ານຮ່າງກາຍ ແລະ ມັນສະໝອງ, ການຮຽນ, ການຝຶກແອບ, ການຝຶກຊ້ອມ, ການສະແດງ, ການແລກປ່ຽນບົດຮຽນຂອງນັກກິລາ , ບຸກຄະລາກອນກິລາ, ການກະກຽມ ແລະ ການແຂ່ງຂັນກິລາ-ກາຍຍະກຳ;
2. ການພັດທະນານັກກິລາ ໝາຍເຖິງ: ການເລືອກເຟັ້ນ, ສ້າງ, ຝຶກແອບ, ຝຶກຊ້ອມ, ທົດສອບນັກກິລາ ໃນລະດັບຮຸ່ນອາຍຸຕ່າງໆ ລວມທັງນັກກິລາ-ກາຍຍະກຳມວນຊົນ ໃຫ້ມີຄວາມຊຳນານ, ສຸຂະພາບແຂງແຮງ, ມີນ້ຳໃຈຮັກຊາດ, ອົດທົນ, ດຸໝັ່ນ, ມີວິໄນ, ມີໄຫວພິບ ເພື່ອເຂົ້າຮ່ວມການຫຼິ້ນກິລາ ແລະ ການແຂ່ງຂັນໃຫ້ມີປະສິດທິຜົນ;
3. ການພັດທະນາບຸກຄະລາກອນກິລາ-ກາຍຍະກຳ ໝາຍເຖິງ: ການຝຶກອົບຮົມ, ບຳລຸງ, ຍົກລະດັບຄວາມຮູ້ທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງກ່ຽວກັບວິຊາການທີ່ກ່ຽວຂ້ອງ ໃຫ້ແກ່ບຸກຄະລາກອນກິລາ - ກາຍຍະກຳ ເພື່ອຮັບໃຊ້ວຽກງານກິລາ-ກາຍຍະກຳ ໃຫ້ມີປະສິດທິພາບ;
4. ການຄຸ້ມຄອງບໍລິຫານກອງທຶນ ໝາຍເຖິງ: ການຄຸ້ມຄອງ, ການລະດົມທຶນ, ການສ້າງແຫຼ່ງທຶນ ແລະ ນຳໃຊ້ແຫຼ່ງທຶນ ໃຫ້ເກີດປະໂຫຍດສູງສຸດ ປະຕິບັດຕາມຂອບເຂດສິດ ແລະ ໜ້າທີ່ໃຫ້ຖືກຕາມລະບຽບກົດໝາຍ;
5. ນັກກິລາ ໝາຍເຖິງ: ຜູ້ທີ່ຫຼິ້ນກິລາ, ເຂົ້າຮ່ວມຝຶກແອບ, ຝຶກຊ້ອມ ແລະ ແຂ່ງຂັນກິລາປະເພດໃດໜຶ່ງ ຫຼື ຫຼາຍປະເພດ;
6. ບຸກຄະລາກອນກິລາ - ກາຍຍະກຳ ໝາຍເຖິງ: ຜູ້ບໍລິຫານການກິລາ, ຄູຝຶກ, ກຳມະການຕັດສິນ ແລະ ນັກວິທະຍາສາດການກິລາ;
7. ວິທະຍາສາດການກິລາ ໝາຍເຖິງ: ການນຳຫຼັກວິຊາການຊຸກຍູ້ສົ່ງເສີມເພີ່ມທັກສະການຝຶກຊ້ອມ, ໂພຊະນາການ, ຈິດຕະວິທະຍາ, ເຕັກໂນໂລຊີທາງການກິລາ ມາປະຍຸກໃຊ້ໃນການອອກກຳລັງກາຍ, ການຝຶກຊ້ອມນັກກິລາ ໃຫ້ມີສຸຂະພາບແຂງແຮງ, ມີຄວາມຊຳນານ ຄ່ອງແຄ້ວ ເພື່ອກະກຽມເຂົ້າຮ່ວມການແຂ່ງຂັນ.

**ມາດຕາ 4 ຫຼັກການຄຸ້ມຄອງບໍລິຫານ ກທພກ**

ການຄຸ້ມຄອງບໍລິຫານ ກທພກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຢ່າງເຂັ້ມງວດ;
2. ຮັບປະກັນນຳໃຊ້ກອງທຶນ ໃຫ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນ ຕາມລະບຽບການເງິນ;
3. ຮັບປະກັນລາຍຈ່າຍ ຕາມແຜນງົບປະມານປະຈຳປີ ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ມີຄວາມໂປ່ງໃສ, ກວດສອບ ແລະ ກວດກາໄດ້;
4. ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງຜ່ານລະບົບບັນຊີເງິນຝາກຢູ່ຄັງເງິນແຫ່ງຊາດ ປະຈຳນະຄອນຫຼວງວຽງຈັນ;
5. ໃຫ້ມີການຕິດຕາມ, ກວດກາ, ຄົ້ນຄວ້າ ແລະ ລາຍງານຢ່າງເປັນປົກກະຕິ ຕາມກົດໝາຍ ແລະ ລະບຽບການ;

**ມາດຕາ 5 ນະໂຍບາຍກ່ຽວກັບວຽກງານ ກທພກ**

ນະໂຍບາຍ ກທພກ ປະກອບມີດັ່ງນີ້:

1. ສົ່ງເສີມການຈັດຕັ້ງປະຕິບັດ ການພັດທະນາກິລາ - ກາຍຍະກຳ ໃຫ້ກ້າວໄປເຖິງການສ້າງນັກກິລາສູ່ຄວາມເປັນເລີດ;

2. ຊຸກຍູ້, ສົ່ງເສີມດ້ວຍການສ້າງເງື່ອນໄຂ ອຳນວຍຄວາມສະດວກ ແລະ ມີນະໂຍບາຍໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ການພັດທະນາກິລາ - ກາຍຍະກຳ ຕາມລະບຽບກົດໝາຍ;
3. ຊຸກຍູ້, ສົ່ງເສີມ ພັດທະນາກິລາ-ກາຍຍະກຳ ດ້ວຍການສະໜອງງົບປະມານປັບປຸງພື້ນຖານໂຄງລ່າງ, ວັດຖຸ ອຸປະກອນ, ໃຫ້ນັກກິລາ ແລະ ບຸກຄະລາກອນກິລາ ຂອງນະຄອນຫຼວງວຽງຈັນ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວຢູ່ນະຄອນຫຼວງວຽງຈັນ.

**ມາດຕາ 7 ການຮ່ວມມືສາກົນ**

ນະຄອນຫຼວງວຽງຈັນ ສົ່ງເສີມໃຫ້ມີການຮ່ວມມືກັບການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການຮ່ວມມືພັດທະນາກິລາ - ກາຍຍະກຳ, ການຍາດແຍ່ງທຶນສະໜັບສະໜູນ, ການແລກປ່ຽນບົດຮຽນຂອງນັກກິລາ ແລະ ບຸກຄະລາກອນກິລາ ໃຫ້ມີຄວາມເຂັ້ມແຂງ, ເປີດກວ້າງຮັບເອົາການຊ່ວຍເຫຼືອຈາກຕ່າງປະເທດ ໂດຍຖືກຕ້ອງຕາມລະບຽບກົດໝາຍ.

## ໝວດ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ ກທພກ

**ມາດຕາ 8 ແຫຼ່ງລາຍຮັບ ກທພກ**

ກທພກ ມີແຫຼ່ງລາຍຮັບ ດັ່ງນີ້:

1. ເງິນເກີນແຜນ, ລາຍຮັບງົບປະມານ ຮ່ວງພັດທະນານະຄອນຫຼວງວຽງຈັນ ຕາມການຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ;
2. ການປະກອບພັນທະໃນແຕ່ລະປີ ຂອງຫົວໜ່ວຍທຸລະກິດທຸກປະເພດກິລາ ແລະ ຜູ້ປະກອບການທົ່ວໄປ ທີ່ຕິດພັນກັບສັງຄົມ, ທຳມະຊາດ ແລະ ສິ່ງແວດລ້ອມ ທີ່ຕັ້ງຢູ່ນະຄອນຫຼວງວຽງຈັນ;
3. ການປະກອບສ່ວນຈາກ ການຈັດກິດຈະກຳແຂ່ງຂັນກິລາ-ກາຍຍະກຳ ຂອງໜ່ວຍກິລາ, ສະໂມສອນ ແລະ ສະຫະພັນກິລາ-ກາຍຍະກຳ ຢູ່ນະຄອນຫຼວງວຽງຈັນ;
4. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ເອກະຊົນ, ພາກສ່ວນທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍຄວາມສະໝັກໃຈ;
5. ລາຍຮັບອື່ນໆທີ່ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 9 ການນຳໃຊ້ ກທພກ**

ການນຳໃຊ້ ກທພກ ມີດັ່ງນີ້:

1. ນຳໃຊ້ເຂົ້າໃນການພັດທະນານັກກິລາ ແລະ ບຸກຄະລາກອນກິລາ - ກາຍຍະກຳ;
2. ການປັບປຸງພື້ນຖານໂຄງລ່າງ ທີ່ມີຄວາມຈຳເປັນ;
3. ການປະຕິບັດນະໂຍບາຍແກ່ ນັກກິລາ ແລະ ບຸກຄະລາກອນກິລາ - ກາຍຍະກຳ ຕາມລະບຽບການ;
4. ຈັດກອງປະຊຸມ ຂອງຄະນະຄຸ້ມຄອງບໍລິຫານ ກທພກ.

**ມາດຕາ 10 ການຄຸ້ມຄອງເບີກຈ່າຍເງິນ ກທພກ**

ການເບີກຈ່າຍ ກທພກ ຕ້ອງປະຕິບັດ ດັ່ງນີ້:

1. ທຸກກິດຈະກຳກ່ຽວກັບການພັດທະນາກິລາ - ກາຍຍະກຳ ຕ້ອງນອນໃນແຜນການປະຈຳປີ ແລະ ຜ່ານການຮັບຮອງຈາກ ຄະນະຄຸ້ມຄອງບໍລິຫານ ກທພກ;
2. ທຸກກິດຈະກຳທີ່ຖືກຮັບຮອງແລ້ວ ຕ້ອງໄດ້ຮັບການອະນຸມັດຈາກ ປະທານ ກທພກ;
3. ການເບີກຈ່າຍເງິນ ກທພກ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ທຸກການນຳໃຊ້ເງິນ ກທພກ ແມ່ນບໍ່ໃຫ້ຊ້ຳຊ້ອນກັບແຫຼ່ງທຶນອື່ນໆ.

**ມາດຕາ 11 ການຖອນເງິນ ກທພກ**

ການຖອນເງິນຈາກບັນຊີ ກທພກ ໃຫ້ມີສອງລາຍເຊັນຂອງຜູ້ທີ່ໄດ້ຮັບສິດ ໃນການຖອນເງິນຈາກບັນຊີກອງທຶນແຕ່ລະຄັ້ງ ຕ້ອງໄດ້ຮັບການຕົກລົງເຫັນດີຈາກປະທານ ກທພກ. ການຖອນເງິນບໍ່ສາມາດຖອນໄດ້ທັງໝົດ ແລະ ຕ້ອງມີເງິນແຮໄວ້ໃນບັນຊີຢ່າງໜ້ອຍ 20 ສ່ວນຮ້ອຍ ຂອງຈຳນວນເງິນທັງໝົດໃນ ກທພກ.

## ໝວດ 3
## ໂຄງປະກອບການຈັດຕັ້ງ ກທພກ

**ມາດຕາ 12 ໂຄງປະກອບການຈັດຕັ້ງ ກທພກ**

ໂຄງປະກອບການຈັດຕັ້ງຄຸ້ມຄອງບໍລິຫານ ກທພກມີດັ່ງນີ້:

1. ໂຄງປະກອບ ຄະນະຄຸ້ມຄອງບໍລິຫານ ກທພກ;
2. ໂຄງປະກອບ ກອງເລຂາ ກທພກ.

**ມາດຕາ 13 ໂຄງປະກອບຄະນະຄຸ້ມຄອງບໍລິຫານ ກອງທຶນພັດທະນາກິລາ - ກາຍຍະກຳ**

ຄະນະຄຸ້ມຄອງບໍລິຫານ ກທພກ ປະກອບດ້ວຍ:

1. ຮອງເຈົ້າຄອງນະຄອນຫຼວງວຽງຈັນ ( ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ - ສັງຄົມ ) ເປັນປະທານ;
2. ຫົວໜ້າພະແນກສຶກສາທິການ ແລະ ກິລາ ນວ ເປັນຮອງປະທານ (ເປັນຜູ້ປະຈຳການ);
3. ຫົວໜ້າພະແນກການເງິນ ນວ ເປັນຮອງປະທານ;
4. ຫົວໜ້າພະແນກຍຸຕິທຳ ນວ ເປັນຄະນະ;
5. ຫົວໜ້າຫ້ອງວ່າການ ນະຄອນຫຼວງວຽງຈັນ ເປັນຄະນະ;
6. ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ນວ ເປັນຄະນະ;
7. ຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນວ ເປັນຄະນະ;
8. ຫົວໜ້າພະແນກແຜນການ ແລະ ການລົງທຶນ ນວ ເປັນຄະນະ;
9. ຫົວໜ້າພະແນກເຕັກໂນໂລຊີ ແລະ ການສື່ສານ ນວ ເປັນຄະນະ;
10. ຫົວໜ້າພະແນກສາທາລະນະສຸກ ນວ ເປັນຄະນະ;
11. ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ນວ ເປັນຄະນະ;
12. ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ ເປັນຄະນະ;
13. ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ນວ ເປັນຄະນະ;

14. ຕ່າງໜ້າອົງການແນວລາວສ້າງຊາດ ນວ ເປັນຄະນະ;
15. ຕ່າງໜ້າອົງການຈັດຕັ້ງມະຫາຊົນ ນວ ເປັນຄະນະ;
16. ປະທານສະພາການຄ້າ ແລະ ອຸດສາຫະກຳ ນວ ເປັນຄະນະ;
17. ເຈົ້າເມືອງ 9 ຕົວເມືອງ ເປັນຄະນະ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງ ຄະນະຄຸ້ມຄອງບໍລິຫານ ກທພກ**

ຄະນະຄຸ້ມຄອງບໍລິຫານ ກທພກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຮອງແຜນພັດທະນາ, ແຜນການເຄື່ອນໄຫວ, ແຜນງົບປະມານປະຈຳປີ, ແຜນງົບປະມານໄລຍະກາງ ນັບແຕ່ 2 ປີ ເຖິງ 3 ປີ ແລະ ແຜນງົບປະມານໄລຍະຍາວ ແຕ່ 5 ປີຂຶ້ນໄປ ຂອງ ກທພກ;
2. ພິຈາລະນາຮັບຮອງເອົາ ລະບຽບການຕ່າງໆຂອງ ກທພກ;
3. ພິຈາລະນາຮັບຮອງເອົາ ແຜນການຝຶກຊ້ອມ ແລະ ເຂົ້າຮ່ວມການແຂ່ງຂັນໃນງານມະຫາກຳກິລານັກຮຽນມັດທະຍົມສຶກສາທົ່ວປະເທດ, ງານມະຫາກຳກິລາແຫ່ງຊາດ ແລະ ງານມະຫາກຳກິລາຄົນພິການແຫ່ງຊາດ;
4. ປຸກລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ, ສັງຄົມ ແລະ ການຈັດຕັ້ງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເຂົ້າ ກທພກ;
5. ຊີ້ນຳ, ນຳພາ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານ, ການຄຸ້ມຄອງບັນຊີລາຍຮັບ ແລະ ລາຍຈ່າຍ ປະຈຳທຶກເດືອນ ແລະ ປະຈຳປີ ຕາມການສັງລວມຂອງ ກອງເລຂາ ກທພກ;
6. ອະທິບາຍ, ຊີ້ແຈງຄວາມສົນໃຈ, ຂໍ້ຂ້ອງໃຈຂອງປະຊາຊົນກ່ຽວກັບ ກທພກ ນະຄອນຫຼວງວຽງຈັນ;
7. ຄົ້ນຄວ້າ ແລະ ນຳສະເໜີ ເຈົ້າຄອງນະຄອນຫຼວງວຽງຈັນ ໃນການປະຕິບັດນະໂຍບາຍການຍ້ອງຍໍຕໍ່ນັກກິລາ, ບຸກຄະລາກອນກິລາ ແລະ ຜູ້ທີ່ມີຜົນງານຄຸນງາມຄວາມດີ ປະກອບສ່ວນທຶນ, ວັດຖຸອຸປະກອນ ແລະ ເຫື່ອແຮງ, ສະຕິປັນຍາ ເຂົ້າໃນການພັດທະນາກິລາ - ກາຍຍະກຳ ນະຄອນຫຼວງວຽງຈັນ;

**ມາດຕາ 15 ໂຄງປະກອບ ກອງເລຂາ ຂອງ ກທພກ**

ກອງເລຂາ ກທພກ ປະກອບດ້ວຍ:

1. ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ( ຜູ້ຊີ້ນຳວຽກກິລາ - ກາຍຍະກຳ ) ເປັນຫົວໜ້າ;
2. ຫົວໜ້າຂະແໜງກິລາ - ກາຍຍະກຳ ສກນວ ເປັນຮອງ;
3. ຫົວໜ້າຂະແໜງຈັດຕັ້ງ ແລະ ບໍລິຫານ ພະແນກການເງິນ ນວ ເປັນຮອງ;
4. ຫົວໜ້າຂະແໜງ ສັງລວມລັດ, ຫ້ອງວ່າການນະຄອນຫຼວງວຽງຈັນ ເປັນຄະນະ;
5. ຫົວໜ້າຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ, ພະແນກອຸດສາຫະກຳ - ການຄ້າ ນວ ເປັນຄະນະ;
6. ຫົວໜ້າຂະແໜງບໍລິຫານ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນວ ເປັນຄະນະ;
7. ຫົວໜ້າຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ, ພະແນກແຜນການ ແລະ ການລົງທຶນ ເປັນຄະນະ;
8. ຫົວໜ້າຂະແໜງບໍລິຫານ, ແຜນການ ແລະ ການເງິນ, ພະແນກສາທາລະນະສຸກ ນວ ເປັນຄະນະ;
9. ຫົວໜ້າຂະແໜງບໍລິຫານ, ພະແນກກະສິກຳ ແລະ ປ່າໄມ້ ນວ ເປັນຄະນະ;
10. ຫົວໜ້າຂະແໜງບໍລິຫານ, ພະແນກເຕັກໂນໂລຊີ ແລະ ການສື່ສານ ນວ ເປັນຄະນະ;
11. ຫົວໜ້າຂະແໜງບໍລິຫານ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ;
12. ຫົວໜ້າຂະແໜງບໍລິຫານ, ພະແນກໂຍທາທິການ ແລະ ຂົນສົ່ງ ນວ ເປັນຄະນະ;
13. ຕ່າງໜ້າສະພາການຄ້າ ແລະ ອຸດສາຫະກຳ ນວ ເປັນຄະນະ;
14. ຫົວໜ້າຫ້ອງວ່າການເມືອງ 9 ຕົວເມືອງ ເປັນຄະນະ.

**ມາດຕາ 16  ສິດ ແລະ ໜ້າທີ່ ກອງເລຂາ ຂອງ ກທພກ**

ກອງເລຂາ ກທພກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ ຄະນະຄຸ້ມຄອງບໍລິຫານ ກທພກ;
2. ສ້າງ, ສັງລວມ ແລະ ນໍາສະເໜີແຜນການເຄື່ອນໄຫວ ນໍາໃຊ້ ກທພກ ຕໍ່ຄະນະຄຸ້ມຄອງບໍລິຫານ ເພື່ອພິຈາລະນາ ແລະ ຮັບຮອງ;
3. ຄົ້ນຄວ້າວິທີການ, ຮູບແບບ ການລະດົມທຶນ ແລະ ວັດຖຸອຸປະກອນ ຈາກພາຍໃນ ແລະ ຕ່າງປະເທດ, ພ້ອມທັງສ້າງລະບຽບການ, ຄໍາແນະນໍາ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຄຸ້ມຄອງບໍລິຫານ ກທພກ;
4. ໂຄສະນາກ່ຽວກັບພາລະບົດບາດ ແລະ ແຜນການເຄື່ອນໄຫວຂອງ ກທພກ ;
5. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງ ກທພກ ໃນແຕ່ລະໄລຍະ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງ ຄະນະຄຸ້ມຄອງບໍລິຫານ ກທພກ.

**ມາດຕາ 17  ກອງປະຊຸມຄະນະຄຸ້ມຄອງບໍລິຫານ ກທພກ**

ກອງປະຊຸມຂອງຄະນະຄຸ້ມຄອງບໍລິຫານ ກທພກ ຈັດຂຶ້ນສອງຄັ້ງຕໍ່ປີ ແລະ ສາມາດຈັດປະຊຸມຕາມຄວາມຈໍາເປັນຂອງວຽກງານ. ກອງປະຊຸມຈະເປີດຂຶ້ນໄດ້ ກໍ່ຕໍ່ເມື່ອມີຄະນະຄຸ້ມຄອງບໍລິຫານ ກທພກ ເຂົ້າຮ່ວມເກີນກວ່າເຄິ່ງໜຶ່ງ ຂອງຄະນະທັງໝົດ. ສໍາລັບງົບປະມານໃນການຈັດກອງປະຊຸມ ໃຫ້ປະຕິບັດຕາມລະບຽບການເງິນ.

## ໝວດ 4
## ການເປີດບັນຊີ, ການກວດສອບບັນຊີ, ການກວດກາ ແລະ ການລາຍງານ

**ມາດຕາ 18  ການເປີດບັນຊີຂອງ ກທພກ**

ລະບົບບັນຊີກອງທຶນພັດທະນາກິລາ - ກາຍຍະກໍາຂອງ ນະຄອນຫຼວງວຽງຈັນ ( ທຸກລາຍຮັບ-ລາຍຈ່າຍຂອງ ກທພກ ) ແມ່ນໃຫ້ເປີດບັນຊີເງິນຝາກຢູ່ຄັງເງິນແຫ່ງຊາດ ປະຈໍານະຄອນຫຼວງວຽງຈັນ.

**ມາດຕາ 19  ການກວດສອບບັນຊີ**

ບັນຊີ ກທພກ ຕ້ອງໄດ້ຮັບການກວດສອບທຸກໆປີ, ໂດຍການກວດສອບພາຍໃນ ແລະ ອົງການກວດສອບ ປະຈໍາພາກກາງ 1 ແລະ ປະຕິບັດວິໄນ ໃນກໍລະນີ ຫາກພົບເຫັນວ່າມີການກະທໍາຜິດ, ຜູ້ກະທໍາຜິດຕ້ອງຖືກປະຕິບັດວິໄນຕາມລະບຽບກົດໝາຍ.

**ມາດຕາ 20  ການກວດກາ**

ການກວດກາ ກທພກ ປະກອບດ້ວຍ:

1. ການກວດກາພາຍໃນ ແມ່ນອົງການດຽວກັບຄະນະຄຸ້ມຄອງບໍລິຫານ ກທພກ;

2. ການກວດກາພາຍນອກ ແມ່ນສະພາປະຊາຊົນນະຄອນຫຼວງວຽງຈັນ, ອົງການກວດສອບ ປະຈຳພາກກາງ 1, ອົງການແນວລາວສ້າງຊາດນະຄອນຫຼວງວຽງຈັນ, ອົງການຈັດຕັ້ງມະຫາຊົນ, ການຈັດຕັ້ງທາງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງ ຕາມພາລະບົດບາດ.

**ມາດຕາ 21 ເນື້ອໃນການກວດກາ**

ກວດກາເນື້ອໃນລາຍລະອຽດ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ແຜນພັດທະນາ, ແຜນການ, ແຜນງານ, ໂຄງການ, ລະບຽບການ ແລະ ນິຕິກຳທີ່ກ່ຽວຂ້ອງ ຂອງ ກທພກ;
2. ການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບ ກທພກ;
3. ລາຍຮັບ - ລາຍຈ່າຍ ການນຳໃຊ້ ກທພກ;
4. ການແກ້ໄຂຄຳສະເໜີບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 22 ຮູບແບບການກວດກາ**

ການກວດກາ ກທພກ ປະກອບມີສາມຮູບແບບ ດັ່ງນີ້:

1. ກວດກາຕາມລະບົບປົກກະຕິ ແມ່ນການກວດກາ ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາ ນອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ກວດກາແບບກະທັນຫັນ ແມ່ນການກວດກາອັນຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ ໃນການກວດກາ ປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

**ມາດຕາ 23 ການລາຍງານ**

ກອງເລຂາ ກທພກ ຕ້ອງສະຫຼຸບລາຍງານເປັນໄຕມາດ ແລະ ປະຈຳປີ ກ່ຽວກັບ ລາຍຮັບ - ລາຍຈ່າຍ, ການປະກອບສ່ວນທຶນ ແລະ ການນຳໃຊ້ກອງທຶນຕໍ່ປະທານ ແລະ ຄະນະຄຸ້ມຄອງບໍລິຫານ ກທພກ.

## ໝວດ 5
## ຂໍ້ຫ້າມ

**ມາດຕາ 24 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ກີດຂວາງ ຫຼື ເມີນເສີຍຕໍ່ການປະກອບສ່ວນວັດຖຸອຸປະກອນ ແລະ ງົບປະມານເຂົ້າໃນ ກທພກ;
2. ໂຄສະນາຕົວະຍົວະຫຼອກລວງ ເພື່ອເອົາເງິນ ກທພກ ໄປໃຊ້ຈ່າຍຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ຍາດພີ່ນ້ອງ;
3. ຈັດຕັ້ງການເຄື່ອນໄຫວກິດຈະກຳ ຫຼື ການແຂ່ງຂັນກິລາ - ກາຍຍະກຳ ເພື່ອລະດົມທຶນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຄະນະຄຸ້ມຄອງບໍລິຫານ ກທພກ;
4. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບ ກທພກ.

**ມາດຕາ 25  ຂໍ້ຫ້າມສໍາລັບພະນັກງານ - ລັດຖະກອນ ແລະ ບຸກຄະລາກອນທີ່ກ່ຽວຂ້ອງ**

ພະນັກງານ - ລັດຖະກອນ ແລະ ບຸກຄະລາກອນກ່ຽວຂ້ອງຫ້າມມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ຕໍາແໜ່ງ, ໜ້າທີ່, ສິດອໍານາດນໍາໃຊ້ເງິນ ກທພກ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຄະນະຄຸ້ມຄອງບໍລິຫານ ກທພກ;
2. ນໍາໃຊ້ເງິນ ກທພກ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ໝູ່ເພື່ອນ ແລະ ຍາດພີ່ນ້ອງ;
3. ກົດໜ່ວງ, ຖ່ວງດຶງ ເອກະສານກ່ຽວກັບວຽກງານພັດທະນາກິລາ - ກາຍຍະກໍາ;
4. ຂໍເອົາ, ທວງເອົາ ຫຼື ຮັບສິນບົນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນທີ່ກ່ຽວຂ້ອງ;
5. ອະນຸມັດ ຫຼື ນໍາໃຊ້ເງິນ ກທພກ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍກໍານົດໄວ້;
6. ມີພຶດຕິກໍາອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການຂອງ ກທພກ.

## ໝວດ 6
## ນະໂຍບາຍຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 26 ນະໂຍບາຍຜູ້ທີ່ມີຜົນງານ**

ຜູ້ທີ່ມີຜົນງານໄດ້ຮັບນະໂຍບາຍ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານໃນການປະກອບສ່ວນ ເຂົ້າໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ເກີດຜົນປະໂຫຍດອັນສູງສຸດ ຕໍ່ການພັດທະນາກິລາ - ກາຍຍະກໍາ ຂອງນະຄອນຫຼວງວຽງຈັນ, ທີ່ໄດ້ສ້າງຊື່ສຽງໃຫ້ແກ່ ນະຄອນຫຼວງວຽງຈັນ ຈະໄດ້ຮັບການຍ້ອງຍໍຕາມລະບຽບຫຼັກການ;
2. ນັກກິລາ ແລະ ບຸກຄະລາກອນກິລາ - ກາຍຍະກໍາ ທີ່ໄດ້ຮັບບາດເຈັບ, ເສຍອົງຄະ ຫຼື ເສຍຊີວິດຈາກການປະຕິບັດ ໜ້າທີ່ໃນໄລຍະການກະກຽມ ແລະ ເຂົ້າຮ່ວມການແຂ່ງຂັນ ຈະໄດ້ຮັບນະໂຍບາຍຄືກັນຕາມລະບຽບປະກັນສັງຄົມ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມວາງອອກ.

**ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຫາກລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະໄດ້ຖືກກ່າວເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ໃຊ້ແທນຄ່າເສຍຫາຍ ແລະ ດໍາເນີນຄະດີຕາມລະບຽບກົດໝາຍ.

## ໝວດ 7
## ບົດບັນຍັດສຸດທ້າຍ

**ມາດຕາ 28  ຕາປະທັບ ກທພກ**

ກທພກ ຈະນໍາໃຊ້ກາປະທັບຂອງ ເຈົ້າຄອງນະຄອນຫຼວງວຽງຈັນ ປະທານ ກທພກ ແລະ ນໍາໃຊ້ກາປະທັບຂອງ ພະແນກສຶກສາທິການ ແລະ ກິລາ ໃນນາມກອງເລຂາ ຂອງ ກທພກ.

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກສຶກສາທິການ ແລະ ກິລາ ເປັນເຈົ້າການສົມທົບກັບ ພະແນກການເງິນ, ບັນດາພະແນກການ, ອົງການທຽບເທົ່າຂັ້ນນະຄອນຫຼວງວຽງຈັນ ແລະ ບັນດາເມືອງ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງສຸດ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳລົງຊີວິດ ຢູ່ນະຄອນຫຼວງວຽງຈັນ ຈົ່ງຮັບຮູ້ ແລະ ປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ອາດສະພັງທອງ ສີພັນດອນ

**ບ່ອນສົ່ງ:**

- ເຈົ້າຄອງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ 03 ສະບັບ.
- ພະແນກການທີ່ຖືກແຕ່ງຕັ້ງ ພາກສ່ວນລະ 01 ສະບັບ.
- ອົງການປົກຄອງເມືອງ 09 ຕົວເມືອງ 09 ສະບັບ.
- ເກັບມ້ຽນ 02 ສະບັບ.